ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 04 ປປທ

ລົງວັນທີ 18 ພະຈິກ 2009

# ລັດຖະບັນຍັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ວ່າດ້ວຍການເກັບອາກອນຊົມໃຊ້ເພີ່ມສຳລັບຢາສູບ ທີ່ຜະລິດຢູ່ພາຍໃນປະເທດ

----------------

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI, ມາດຕາ 67 ຂໍ້ 2;

- ອີງຕາມມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 189/ຄປຈ, ລົງວັນທີ 03 ພະຈິກ 2009 ວ່າດ້ວຍການຮັບຮອງເອົາການປ່ຽນແປງອັດຕາອາກອນຊົມໃຊ້ເພີ່ມສຳລັບຢາສູບ ທີ່ຜະລິດຢູ່ພາຍໃນປະເທດເປັນການຊົ່ວຄາວ.

- ອີງຕາມໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີຕ 063/ຄປຈ, ລົງວັນທີ 03 ພະຈິກ 2009.

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະບັນຍັດ :**

**ມາດຕາ 1** : ເຫັນດີອະນຸມັດໃຫ້ເກັບອາກອນຊົມໃຊ້ເພີ່ມສຳລັບຢາສູບ ທີ່ຜະລິດຢູ່ພາຍໃນປະເທດ ໃນອັດຕາ 100 ກີບ ຕໍ່ຊອງ ( ໜຶ່ງຮ້ອຍກີບ ຕໍ່ຊອງ ) ເປັນການຊົ່ວຄາວ.

**ມາດຕາ 2** : ມອບໃຫ້ລັດຖະບານຄົ້ນຄວ້າເກັບອາກອນຊົມໃຊ້ເພີ່ມສຳລັບຢາສູບທີ່ຜະລິດ ຢູ່ພາຍໃນປະເທດ ຂຶ້ນເປັນແຕ່ລະປີຕາມຄວາມເໝາະສົມຈົນກວ່າເຖິງອັດຕາ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 3** : ລັດຖະບັນຍັດສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ຂໍ້ກຳນົດ ຫຼື ແຈ້ງການໃດໆທີ່ຂັດກັບ ຫລືບໍ່ສອດຄ່ອງກັບລັດຖະບັນຍັດສະບັບນີ້ ແມ່ນລ້ວນແຕ່ຖືກລົບລ້າງ.

ປະທານປະເທດແຫ່ງ ສປປ ລາວ.

ຈູມມາລີ ໄຊຍະສອນ